ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 2036 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 12 OCT 2010

# ຂໍ້ຕົກລົງ

## ວ່າດ້ວຍການມອບສິດໃຫ້ພະແນກອຸດສາຫະກຳ ແລະການຄ້າໃນທົ່ວປະເທດ ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດ (Preferential Certificates of Origin)

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫລ່ງກຳເນີດສິນຄ້ານຳເຂົ້າ ແລະສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010.
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະສົ່ງອອກ.

### ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າອອກຂໍ້ຕົກລົງ:

ມາດຕາ 1. ມອບໃຫ້ພະແນກອຸດສາຫະກຳ ແລະການຄ້ານະຄອນຫລວງ ແລະພະແນກອຸດສາຫະກຳ ແລະການຄ້າແຂວງໃນທົ່ວປະເທດມີສິດອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດປະເພດຕ່າງໆ ດັ່ງນີ້:

1. ຟອມ ເອ (Certificate of Origin Form A) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນພາຍໃຕ້ໂຄງການ GSP ທີ່ປະເທດພັດທະນາແລ້ວໃຫ້ແກ່ ສປປ ລາວ, ແຕ່ໃຫ້ອອກສະເພາະແຕ່ສິນຄ້າກະສິກຳທີ່ໄດ້ມາ ຫລື ຜະລິດທັງໝົດ (Goods wholly obtained or produced) ຢູ່ປະເທດລາວເທົ່ານັ້ນ ໝາຍຄວາມວ່າອອກໃຫ້ແກ່ລາຍການສິນຄ້າຢູ່ໝວດທີ 1 ຫາ ໝວດທີ 8 ຕາມສາລະບານອັດຕາພາສີລະບົບເອກະພາບອາຊຽນ.

2. ຟອມ SPT (Certificate of Origin Form SPT) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນທີ່ສປ ຈີນ ໃຫ້ແກ່ສປປ ລາວ ແບບຝ່າຍດຽວ.

3. ຟອມ CO ເກົາຫລີ (Form CO Korea) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນທີ່ສາທາລະນະລັດເກົາຫລີ ໃຫ້ແກ່ສປປ ລາວ ແບບຝ່າຍດຽວ.

4. ຟອມ DFTP (Certificate of Origin Form DFTP) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນ ທີ່ປະເທດອິນເດຍ ໃຫ້ແກ່ສປປ ລາວ ແບບຝ່າຍດຽວ.

5. ຟອມ ເອສ (Certificate of Origin Form S) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນພາຍໃຕ້ສັນຍາແບບທະວິພາຄີລະຫວ່າງສປປ ລາວ ກັບ ສສ ຫວຽດນາມ.

6. ຟອມ ດີ (Certificate of Origin Form D) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນພາຍໃຕ້ເຂດການຄ້າເສລີອາຊຽນ.

7. ຟອມ ອີ (Certificate of Origin Form E) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນພາຍໃຕ້ເຂດການຄ້າເສລີອາຊຽນ-ຈີນ.

8. ຟອມ ເອເຄ (Certificate of Origin Form AK) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນພາຍໃຕ້ເຂດການຄ້າເສລີອາຊຽນ-ເກົາຫລີ.

9. ຟອມ ເອເຈ (Certificate of Origin Form AJ) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນພາຍໃຕ້ເຂດການຄ້າເສລີອາຊຽນ-ຍີ່ປຸ່ນ.

10. ຟອມ APTA (Certificate of Origin Form APTA) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນພາຍໃຕ້ສັນຍາການຄ້າອາຊີ-ປາຊີຟິກ.

11. ຟອມ AANZ (Certificate of Origin Form AANZ) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນພາຍໃຕ້ເຂດການຄ້າເສລີອາຊຽນ-ອົດສະຕາລີ-ນີວຊີແລນ.

12. ຟອມ AI (Certificate of Origin Form AI) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີອາກອນພາຍໃຕ້ເຂດການຄ້າເສລີອາຊຽນ-ອິນເດຍ.

ມາດຕາ 2. ມອບໃຫ້ກົມການນໍາເຂົ້າ ແລະສົ່ງອອກ (ພະແນກຄຸ້ມຄອງແຫລ່ງກໍາເນີດສິນຄ້າ) ມີສິດອອກໃບຢັ້ງຢືນແຫລ່ງກໍາເນີດສິນຄ້າ ໃຫ້ແກ່ທຸກລາຍການສິນຄ້າທີ່ໄດ້ສິດພິເສດທາງການຄ້າ ແລະເປັນໃຈ

ການປະສານງານກັບພະແນກອຸດສາຫະກຳ ແລະການຄ້ານະຄອນຫລວງ ແລະພະແນກອຸດສາຫະກຳ ແລະການຄ້າແຂວງໃນທົ່ວປະເທດເພື່ອຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າໃຫ້ຖືກຕ້ອງຕາມລະບຽບການທີ່ໄດ້ກຳນົດໄວ້.

ມາດຕາ 3. ຜູ້ຜະລິດ ແລະຜູ້ສົ່ງອອກທີ່ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍ ວ່າດ້ວຍວິສາຫະກິດ ຫາກຕ້ອງການໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ເພື່ອນຳໃຊ້ສິດພິເສດທາງການຄ້າສາມາດຍື່ນຄຳຮ້ອງຕາມແບບຟອມທີ່ໄດ້ກຳນົດໄວ້ ຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ ທີ່ກຳນົດໄວ້ໃນມາດຕາ 1 ແລະ ມາດຕາ 2 ຂ້າງເທິງ.

ມາດຕາ 4. ຖ້າວ່າ ມີບັນຫາເກີດຂຶ້ນກ່ຽວກັບ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໜ່ວຍງານຂອງລັດ ແລະຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ ຄວນລາຍງານຕໍ່ກະຊວງອຸດສາຫະກຳ ແລະການຄ້າ ໃຫ້ໄວເທົ່າທີ່ຈະໄວໄດ້ເພື່ອແກ້ໄຂ ຢ່າງທັນເວລາ.

ມາດຕາ 5. ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ພາຍຫລັງ 30 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງ ຫລື ແຈ້ງການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ,

ດຣ. ນາມ ວິຍະເກດ